ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 765/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຜັນຂະຫຍາຍການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ສະບັບເລກທີ 93/ນຍ, ລົງວັນທີ 14 ກໍລະກົດ 2023.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດເງື່ອນໄຂ, ຂັ້ນຕອນ ແລະ ກົນໄກການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຊຶ່ງເປັນການຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ສະບັບເລກທີ 93/ນຍ, ລົງວັນທີ 14 ກໍລະກົດ 2023 ໃຫ້ເປັນອັນລະອຽດ, ຈັດຕັ້ງປະຕິບັດໃຫ້ເອກະພາບ ແລະ ມີປະສິດທິຜົນ.

**ມາດຕາ 2 ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ**

ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແມ່ນນະໂຍບາຍສະໜອງແຫຼ່ງທຶນດອກເບ້ຍຕ່ຳໃຫ້ແກ່ທະນາຄານທຸລະກິດ ເພື່ອກະຈາຍການປ່ອຍກູ້ໃຫ້ຫົວໜ່ວຍທຸລະກິດໃນຂອບເຂດທົ່ວປະເທດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ທະນາຄານແຫ່ງ ສປປ ລາວ, ຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ, ທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດ ທີ່ເຂົ້າຮ່ວມການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ.

## ໝວດທີ 2
## ການຈັດຕັ້ງປະຕິບັດນະໂຍບາຍ

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນໃນການຈັດຕັ້ງປະຕິບັດນະໂຍບາຍ ແມ່ນນຳໃຊ້ທຶນຂອງທະນາຄານແຫ່ງ ສປປ ລາວ ຈຳນວນ 4.500 (ສີ່ພັນຫ້າຮ້ອຍ) ຕື້ກີບ ໂດຍມີກຳນົດເວລາຈັດຕັ້ງປະຕິບັດ ແຕ່ປີ 2023 ຮອດປີ 2025. ແຫຼ່ງທຶນດັ່ງກ່າວ ມີອາຍຸ ຫ້າ ປີ ຊຶ່ງຈະຖືກຈັດສັນໃຫ້ເປັນແຫຼ່ງທຶນສຳລັບທະນາຄານທຸລະກິດ ເພື່ອປ່ອຍກູ້ໃນວົງເງິນບໍ່ເກີນ 5 (ຫ້າ) ຕື້ກີບ ຕໍ່ຫົວໜ່ວຍທຸລະກິດ ທີ່ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ .

**ມາດຕາ 5 ການຈັດສັນແຫຼ່ງທຶນ**

ທະນາຄານແຫ່ງ ສປປ ລາວ ຈັດສັນແຫຼ່ງທຶນ ໃຫ້ທະນາຄານທຸລະກິດທີ່ເຂົ້າຮ່ວມການຈັດຕັ້ງປະຕິບັດນະໂຍບາຍ ເພື່ອກະຈາຍສິນເຊື່ອໃຫ້ແກ່ຫົວໜ່ວຍທຸລະກິດທີ່ຕັ້ງຢູ່ບັນດາແຂວງໃນວົງເງິນ ດັ່ງນີ້:

1. ຈຳນວນ 100 (ໜຶ່ງຮ້ອຍຕື້) ກີບຕໍ່ປີຕໍ່ແຂວງ ສຳລັບນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ;

2. ຈຳນວນ 80 (ແປດສິບ) ຕື້ກີບຕໍ່ປີຕໍ່ແຂວງ ສຳລັບແຂວງ ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ຫົວພັນ, ໄຊຍະບູລີ, ຊຽງຂວາງ, ໄຊສົມບູນ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສາລະວັນ, ເຊກອງ ແລະ ອັດຕະປື.

**ມາດຕາ 6 ອັດຕາດອກເບ້ຍ**

ການກຳນົດອັດຕາດອກເບ້ຍ ສຳລັບນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ມີດັ່ງນີ້:

1. ທະນາຄານແຫ່ງ ສປປ ລາວ ສະໜອງທຶນໃຫ້ທະນາຄານທຸລະກິດ ໃນອັດຕາດອກເບ້ຍຄົງທີ່ 2,5% ຕໍ່ປີ;

2. ທະນາຄານທຸລະກິດ ປ່ອຍກູ້ໃຫ້ຫົວໜ່ວຍທຸລະກິດໃນອັດຕາດອກເບ້ຍ ສູງສຸດບໍ່ເກີນ 6% ຕໍ່ປີ (ບໍ່ເກັບຄ່າທຳນຽມທີ່ຕິດພັນໃນການປ່ອຍກູ້).

**ມາດຕາ 7 ຂະແໜງການເປົ້າໝາຍ**

ເປົ້າໝາຍ ທີ່ໄດ້ຮັບນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຕ້ອງເປັນຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂອງທ້ອງຖິ່ນ ດັ່ງນີ້:

1. **ຂະແໜງກະສິກຳ ແລະ ປ່າໄມ້:**

**- ການປູກຝັງ:** ກາເຟ, ຊາ, ຢາງພາລາ, ໝາກໄມ້ (ໝາກມ່ວງ, ໝາກມີ້, ໝາກກ້ຽງເປືອກໜາ, ໝາກກ້ຽງຂຽວ, ໝາກກ້ຽງນ້ອຍ, ໝາກພຸກ, ໝາກມ່ວງ ໝາກຖົ່ວລຽນ, ໝາກນອດ, ໝາກມັງກອນ), ໄມ້ປູກ (ໄມ້ວິກ, ໄມ້ກະຖິນນາລົງ, ໄມ້ເກດສະໜາ, ທີມະພານ, ໄມ້ຕື້ວ ລວມທັງຜະລິດຕະພັນໄມ້ປູກ ເຊັ່ນ: ໄມ້ອັດ, ເຫຍື່ອເຈ້ຍ ແລະ ເຄື່ອງໃຊ້ຄົວເຮືອນ);

**- ການປູກພືດອາຍຸສັ້ນ:** ເຂົ້າ, ສາລີ, ຖົ່ວເຫຼືອງຝັກສົດ, ຖົ່ວເບີ, ຢາສູບ, ຖົ່ວດິນ, ອ້ອຍ, ພືດຜັກ, ໝາກແຕງໂມ, ໝາກອຶ;

**- ການລ້ຽງສັດ:** ໝູ, ແບ້, ແກະ, ສັດປີກ, ສັດນ້ຳ.

2. **ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ:**

**- ການປຸງແຕ່ງອາຫານ ແລະ ເຄື່ອງດື່ມ:** ຜະລິດຕະພັນແປຮູບຊີ້ນ (ໝູ, ໄກ່ ແລະ ປາ), ນ້ຳມັນພືດ (ປາມ, ຖົ່ວເຫຼືອງ ແລະ ງາ), ເຄື່ອງປຸງ (ນ້ຳຊອດໝາກເລັ່ນ-ໝາກເຜັດ, ນ້ຳປາ, ນ້ຳສະອິວ), ໝາກໄມ້ກະປ໋ອງ (ໝາກໄມ້ດອງ ແລະ ນ້ຳໝາກໄມ້), ນົມ ແລະ ຜະລິດຕະພັນຈາກນົມ, ປາແດກສຳເລັດຮູບ, ເສັ້ນໝີ່, ເສັ້ນເຝີ, ເຂົ້າປຽກ, ເຂົ້າປຸ້ນ;

**- ເຄມີອຸດສາຫະກຳ:** ສະບູ່ (ແຫຼວ, ກ້ອນ), ນ້ຳຢາຊັກຜ້າ, ຢາສະຜົມ, ນ້ຳຢາດັບກິ່ນ, ນ້ຳຢາລ້າງຈານ, ຢາປົວພະຍາດ, ອຸປະກອນການແພດ, ເຈ້ຍຂາວ, ເຈ້ຍທິສຊູ, ອຸດສາຫະກຳຈາກຢາງພາລາ;

**- ເຄື່ອງຫຸ້ມຫໍ່:** ຂວດແກ້ວ, ຂວດປຣາສະຕິກ, ຜະລິດກ່ອງບັນຈຸຕ່າງໆ, ແກັດເຈ້ຍ, ຖົງບັນຈຸ (ເຂົ້າ, ສາລີ, ຊີມັງ, ປຸ໋ຍ ແລະ ອາຫານສັດ);

**- ວັດສະດຸກໍ່ສ້າງ:** ກະເບື້ອງມຸງຫຼັງຄາ, ຊີແພັກ, ບ໊ອດ, ດອກຕະປູ, ຕາໜ່າງເຫຼັກ, ຕາໜ່າງຢາງ, ໝາມໝາກຈັບ;

**- ຫັດຖະກຳ:** ແຜ່ນແພພື້ນເມືອງ, ໄມ້, ຫວາຍ, ໄມ້ປ່ອງ ແລະ ເຄືອໄມ້, ເຄື່ອງປັ້ນດິນເຜົາ, ເຄື່ອງປະດັບ, ເຄື່ອງດື່ມພື້ນເມືອງ.

3. **ຂະແໜງບໍລິການ-ທ່ອງທ່ຽວ ແລະ ຂະແໜງການຄ້າ:**

**- ບໍລິການ-ທ່ອງທ່ຽວ:** ທີ່ພັກແຮມ (ໂຮງແຮມຂະໜາດກາງ, ຂະໜາດນ້ອຍ ແລະ ເຮືອນພັກ), ສະຖານທີ່ທ່ອງທ່ຽວ (ປັບປຸງທາງຍ່າງ, ປ້າຍຊີ້ບອກ, ສະຖານທີ່ຈອດລົດ, ຫ້ອງຂໍ້ມູນຂ່າວສານ, ກິດຈະກຳທ່ອງທ່ຽວ ແລະ ປະດັບປະດາຕົບແຕ່ງສະຖານທີ່ໃຫ້ຈົບງາມ), ທຸລະກິດນຳທ່ຽວ (ການປະກອບພາຫະນະຂົນສົ່ງນັກທ່ອງທ່ຽວ, ອຸປະກອນຮັບໃຊ້ທີ່ຈຳເປັນສຳລັບຄວາມປອດໄພ, ປັບປຸງຜະລິດຕະພັນການທ່ອງທ່ຽວ), ຮ້ານອາຫານ (ຮ້ານອາຫານທ້ອງຖິ່ນທີ່ເປັນເອກະລັກ ສາມາດຮອງຮັບນັກທ່ອງທ່ຽວກຸ່ມໃຫຍ່ໄດ້);

**- ການຄ້າ:** ການເກັບຊື້ສິນຄ້າກະສິກຳ ແລະ ຮ້ານຈຳໜ່າຍຜະລິດຕະພັນທີ່ຜະລິດຢູ່ພາຍໃນ.

## ມາດຕາ 8 ເງື່ອນໄຂຂອງຫົວໜ່ວຍທຸລະກິດ

ຫົວໜ່ວຍທຸລະກິດທີ່ມີຈຸດປະສົງກູ້ຢືມແຫຼ່ງທຶນຂອງທະນາຄານແຫ່ງ ສປປ ລາວ ໂດຍຜ່ານທະນາຄານທຸລະກິດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ;

2. ມີໃບອະນຸຍາດດຳເນີນທຸລະກິດ ທີ່ສອດຄ່ອງຕາມຂະແໜງການເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນ

ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້. ກໍລະນີ ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດດຽວກັນ ເພື່ອຂໍແຫຼ່ງທຶນຈາກທະນາຄານທຸລະກິດໃດໜຶ່ງແລ້ວ ຈະບໍ່ມີສິດຂໍແຫຼ່ງທຶນນີ້ ຈາກທະນາຄານທຸລະກິດອື່ນອີກ;

3. ເປັນຫົວໜ່ວຍທຸລະກິດ ທີ່ມີເງິນລົງທຶນຂອງຕົນເອງ ຫຼາຍກວ່າ ສາມສິບສ່ວນຮ້ອຍ (30%) ຂອງເງິນລົງທຶນທັງໝົດ, ມີພື້ນຖານ, ຄວາມພ້ອມໃນການຜະລິດ ແລະ ການບໍລິການ;

4. ເປັນຫົວໜ່ວຍທຸລະກິດທີ່ຖືບັນຊີ ແລະ ປະຕິບັດພັນທະອາກອນ ຕາມກົດໝາຍທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ເປັນປົກກະຕິ;

5. ເປັນຫົວໜ່ວຍທຸລະກິດທີ່ບໍ່ທັນໄດ້ຮັບນະໂຍບາຍດັ່ງກ່າວ ຈາກທະນາຄານທຸລະກິດອື່ນມາກ່ອນ;

6. ມີເງື່ອນໄຂອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

## ມາດຕາ 9 ການສະເໜີຂໍແຫຼ່ງທຶນຈາກທະນາຄານແຫ່ງ ສປປ ລາວ

ທະນາຄານທຸລະກິດ ສະເໜີຂໍແຫຼ່ງທຶນຈາກທະນາຄານແຫ່ງ ສປປ ລາວ ເພື່ອປ່ອຍກູ້ໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ໂດຍໃຫ້ຍື່ນເອກະສານສະເໜີຕໍ່ທະນາຄານແຫ່ງ ສປປ ລາວ. ໃນນັ້ນ, ທະນາຄານທຸລະກິດທີ່ໄດ້ອະນຸມັດເງິນກູ້ໃຫ້ຫົວໜ່ວຍທຸລະກິດທີ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ໃຫ້ຍື່ນຕໍ່ກົມບໍລິການທະນາຄານ, ສ່ວນແຂວງອື່ນ ໃຫ້ຍື່ນຕໍ່ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ທີ່ຮັບຜິດຊອບຄຸ້ມຄອງທະນາຄານທຸລະກິດໃນແຂວງດັ່ງກ່າວ.

ເອກະສານສະເໜີຂໍແຫຼ່ງທຶນ ມີດັ່ງນີ້:

1. ໜັງສືສະເໜີຂອງທະນາຄານທຸລະກິດ;

2. ຂໍ້ມູນກ່ຽວກັບຫົວໜ່ວຍທຸລະກິດ ເຊັ່ນ: ຊື່, ທີ່ຕັ້ງ, ທຶນຈົດທະບຽນ, ປະເພດທຸລະກິດ, ວົງເງິນສະເໜີກູ້, ເປົ້າໝາຍນໍາໃຊ້ເງິນກູ້ ແລະ ເນື້ອໃນອື່ນ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;

3. ສໍານວນເອກະສານເງິນກູ້ຂອງຫົວໜ່ວຍທຸລະກິດ ຄື:

1) ໜັງສືສະເໜີຂໍກູ້ຢືມຂອງຫົວໜ່ວຍທຸລະກິດ, ສໍາເນົາໃບທະບຽນວິສາຫະກິດ, ສໍາເນົາໃບອະນຸຍາດດໍາເນີນທຸລະກິດ, ສໍາເນົາໃບຢັ້ງຢືນການມອບພັນທະອາກອນ, ເອກະສານລາຍງານການເງິນ ແລະ ອື່ນໆ ຕາມລະບຽບການສະໜອງສິນເຊື່ອຂອງທະນາຄານທຸລະກິດ;

2) ໜັງສືຢັ້ງຢືນການອະນຸມັດເງິນກູ້ ລະຫວ່າງ ທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດ;

3) ບົດປະເມີນສິນເຊື່ອຂອງ ທະນາຄານທຸລະກິດ ຕິດພັນກັບຫົວໜ່ວຍທຸລະກິດແຕ່ລະລາຍ;

4) ແຜນລະອຽດການນໍາໃຊ້ເງິນກູ້ຂອງຫົວໜ່ວຍທຸລະກິດ;

5) ເອກະສານອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

## ມາດຕາ 10 ໄລຍະສະເໜີຂໍແຫຼ່ງທຶນ

ກົມບໍລິການທະນາຄານ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ເລີ່ມຮັບເອກະສານສະເໜີຂໍແຫຼ່ງທຶນຈາກທະນາຄານທຸລະກິດ ຕາມໄລຍະເວລາ ດັ່ງນີ້:

1. ເລີ່ມແຕ່ວັນທີ 01 ກັນຍາ 2023 ຫາວັນທີ 30 ພະຈິກ 2023;

2. ເລີ່ມແຕ່ວັນທີ 01 ມັງກອນ 2024 ຫາວັນທີ 28 ພະຈິກ 2025.

**ມາດຕາ 11 ການພິຈາລະນາການສະເໜີຂໍແຫຼ່ງທຶນ**

ກົມບໍລິການທະນາຄານ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ໃຫ້ດໍາເນີນພິຈາລະນາການສະເໜີຂອງທະນາຄານທຸລະກິດ ດັ່ງນີ້:

1. ກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງຂອງເອກະສານ;

2. ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອຢັ້ງຢືນທຸລະກິດທີ່ສະເໜີຂໍແຫຼ່ງທຶນ ໃຫ້ສອດຄ່ອງກັບຂະແໜງການເປົ້າໝາຍ ທີ່ໄດ້ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຊຶ່ງຂະແໜງການທີ່ກ່ຽວຂ້ອງ ຕ້ອງແຈ້ງຕອບ ພາຍໃນເວລາ ຫ້າວັນລັດຖະການ;

3. ຄົ້ນຄວ້າ ແລະ ນໍາສະເໜີຕໍ່ຄະນະຮັບຜິດຊອບຈັດຕັ້ງປະຕິບັດ ພາຍໃນເວລາ ສິບວັນລັດຖະການ.

ຄະນະຮັບຜິດຊອບຈັດຕັ້ງປະຕິບັດ ພິຈາລະນາການສະເໜີ ແລະ ແຈ້ງຕອບໃຫ້ທະນາຄານທຸລະກິດ ພາຍໃນເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ທີ່ຄົບຖ້ວນ ແລະ ຖືກຕ້ອງ.

ການພິຈາລະນາຂອງຄະນະຮັບຜິດຊອບຈັດຕັ້ງປະຕິບັດ ຕ້ອງຮັບປະກັນການປະຕິບັດໃຫ້ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5, 6, 7, 8 ແລະ 9 ຂອງຂໍ້ຕົກລົງສະບັບນີ້ ແລະ ກະຈາຍແຫຼ່ງທຶນເຂົ້າສູ່ຂະແໜງການຕ່າງໆ ໃນເປົ້າໝາຍທີ່ສອດຄ່ອງຕາມຈຸດພິເສດ ແລະ ທ່າແຮງເສດຖະກິດໃນທ້ອງຖິ່ນ. ໃນເວລາພິຈາລະນາການສະເໜີຂໍແຫຼ່ງທຶນ ຫາກເຫັນວ່າມີຄວາມຈໍາເປັນ ຄະນະຮັບຜິດຊອບຈັດຕັ້ງປະຕິບັດ ສາມາດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຈາກທະນາຄານທຸລະກິດ.

**ມາດຕາ 12 ການເຊັນສັນຍາເງິນກູ້**

ພາຍຫຼັງຄະນະຮັບຜິດຊອບຈັດຕັ້ງປະຕິບັດ ອະນຸມັດແຫຼ່ງທຶນເງິນກູ້ໃຫ້ທະນາຄານທຸລະກິດແລ້ວ ກົມບໍລິການທະນາຄານ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ຕ້ອງແຈ້ງໃຫ້ທະນາຄານທຸລະກິດຢ່າງເປັນລາຍລັກອັກສອນ ພາຍໃນເວລາ ສາມວັນລັດຖະການ ແລະ ດໍາເນີນການເຊັນສັນຍາຮັບແຫຼ່ງທຶນເງິນກູ້ຈາກທະນາຄານແຫ່ງ ສປປ ລາວ ດັ່ງນີ້:

1. ກົມບໍລິການທະນາຄານ ເຊັນສັນຍາກັບ ທະນາຄານທຸລະກິດທີ່ປ່ອຍກູ້ໃຫ້ຫົວໜ່ວຍທຸລະກິດທີ່ມີທີ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ;

2. ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ເຊັນສັນຍາກັບ ທະນາຄານທຸລະກິດທີ່ປ່ອຍກູ້ໃຫ້ຫົວໜ່ວຍທຸລະກິດທີ່ມີທີ່ຕັ້ງຢູ່ບັນດາແຂວງທີ່ຕົນຮັບຜິດຊອບ.

**ມາດຕາ 13 ການເບີກຖອນ**

ທະນາຄານທຸລະກິດ ຕ້ອງຍື່ນສະເໜີຂໍເບີກຖອນ ກັບ ກົມບໍລິການທະນາຄານ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ແລະ ປະກອບເອກະສານໃຫ້ຄົບຖ້ວນຕາມທີ່ກໍານົດໄວ້ໃນສັນຍາເງິນກູ້.

**ມາດຕາ 14 ການຊໍາລະຕົ້ນທຶນ ແລະ ດອກເບ້ຍ**

ການຊໍາລະຕົ້ນທຶນ ແລະ ດອກເບ້ຍຂອງທະນາຄານທຸລະກິດ ໃຫ້ປະຕິບັດ ດັ່ງນີ້:

1. ທະນາຄານທຸລະກິດ ຊໍາລະໜີ້ໃຫ້ທະນາຄານແຫ່ງ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນສັນຍາພາຍໃນເວລາຫ້າປີ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ;

2. ການຊຳລະຕົ້ນທຶນ ສາມາດແບ່ງເປັນງວດໃນແຕ່ລະປີ ໂດຍມີການກຳນົດແຜນຊຳລະໜີ້ໃນສັນຍາ, ໃນນັ້ນ ສັດສ່ວນໃນການຊຳລະໜີ້ຕົ້ນທຶນໃຫ້ກຳນົດຄື: ປີທີ ສາມ ສັດສ່ວນ ຊາວສ່ວນຮ້ອຍ, ປີທີ ສີ່ ສັດສ່ວນ ສາມສິບສ່ວນຮ້ອຍ ແລະ ປີທີ ຫ້າ ສັດສ່ວນ ຫ້າສິບສ່ວນຮ້ອຍ ຂອງວົງເງິນກູ້ຢືມ;

3. ການຊຳລະດອກເບ້ຍ ແມ່ນດຳເນີນທຸກທ້າຍເດືອນ ມີນາ, ມິຖຸນາ, ກັນຍາ ແລະ ທັນວາ ຂອງທຸກປີ;

4. ທະນາຄານທຸລະກິດ ສາມາດສະເໜີຂໍໄລຍະປອດໜີ້ຕົ້ນທຶນຕາມຄວາມຈຳເປັນຕົວຈິງ ແຕ່ບໍ່ເກີນສອງປີທຳອິດ ແລະ ໃຫ້ມີໄລຍະປອດໜີ້ຕົ້ນທຶນໃຫ້ແກ່ຫົວໜ່ວຍທຸລະກິດບໍ່ຫຼຸດ ໜຶ່ງສ່ວນສາມ ຂອງອາຍຸສັນຍາກູ້ຢືມ.

**ມາດຕາ 15 ພັນທະຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີພັນທະ ດັ່ງນີ້:

1. ຮັບຜິດຊອບຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ໃຫ້ທະນາຄານແຫ່ງ ສປປ ລາວ;

2. ຕິດຕາມ, ຄຸ້ມຄອງ ແລະ ກວດກາ ການນຳໃຊ້ທຶນຂອງຫົວໜ່ວຍທຸລະກິດ ໃຫ້ໄປຕາມຈຸດປະສົງຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີ ຫາກມີການປ່ຽນແປງໃດໆ ທີ່ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ຕ້ອງແຈ້ງໃຫ້ ກົມບໍລິການທະນາຄານ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ທັນທີ ເພື່ອຫາວິທີແກ້ໄຂຮ່ວມກັນ;

3. ສະຫຼຸບການນຳໃຊ້ແຫຼ່ງທຶນ ແລະ ລາຍງານປະຈຳເດືອນ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ທີ່ກຳນົດໄວ້.

**ມາດຕາ 16 ພັນທະຂອງຫົວໜ່ວຍທຸລະກິດ**

ຫົວໜ່ວຍທຸລະກິດ ມີພັນທະ ດັ່ງນີ້:

1. ນຳໃຊ້ເງິນກູ້ຖືກຕ້ອງຕາມເປົ້າໝາຍ ທີ່ກຳນົດໄວ້ນະໂຍບາຍສະບັບນີ້ ແລະ ສັນຍາເງິນກູ້ ລະຫວ່າງ ທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດ;

2. ຊຳລະຕົ້ນທຶນ ແລະ ດອກເບ້ຍຄືນຖ້ວນ ໃຫ້ຕາມທີ່ໄດ້ກຳນົດໄວ້ໃນສັນຍາເງິນກູ້ ລະຫວ່າງ ທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດ;

3. ປະຕິບັດພັນທະອື່ນ ທີ່ກຳນົດໃນສັນຍາເງິນກູ້ ແລະ ຕາມລະບຽບການກ່ຽວຂ້ອງຂອງທະນາຄານທຸລະກິດ.

## ໝວດທີ 3
## ຄະນະຮັບຜິດຊອບຈັດຕັ້ງປະຕິບັດ

**ມາດຕາ 17 ໂຄງປະກອບຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍ**

ຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຖືກແຕ່ງຕັ້ງໂດຍເຈົ້າຄອງນະຄອນຫຼວງວຽງຈັນ ຫຼື ເຈົ້າແຂວງ ແລະ ກຳນົດບຸກຄະລາກອນໃຫ້ມີຄວາມເໝາະສົມ ບໍ່ເກີນເກົ້າຄົນ ໂດຍມີຮອງ ເຈົ້າຄອງນະຄອນຫຼວງວຽງຈັນ ຫຼື ແຂວງ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຫົວໜ້າຄະນະ ແລະ ມີພະແນກການກ່ຽວຂ້ອງຂັ້ນທ້ອງຖິ່ນ ຕາມລັກສະນະທ່າແຮງຂອງຕົນ ເປັນຮອງຫົວໜ້າຄະນະ,

ຕາງໜ້າທະນາຄານແຫ່ງ ສປປ ລາວ ເປັນຄະນະ. ງົບປະມານໃນການເຄື່ອນໄຫວວຽກງານຂອງຄະນະດັ່ງກ່າວ ນໍາໃຊ້ງົບປະມານຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍ**

ຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ອະນຸມັດ ຫຼື ປະຕິເສດ ການສະເໜີຂໍແຫຼ່ງທຶນ ຂອງທະນາຄານທຸລະກິດ ບົນພື້ນຖານການຄົ້ນຄວ້າຂອງ ກົມບໍລິການທະນາຄານ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ;

2. ຄົ້ນຄວ້າຈັດສັນແຫຼ່ງທຶນເຂົ້າສູ່ຂະແໜງການເປົ້າໝາຍ ໃນອັດຕາສ່ວນທີ່ສອດຄ່ອງຕາມຈຸດພິເສດ ແລະ ທ່າແຮງເສດຖະກິດໃນທ້ອງຖິ່ນ;

3. ຄຸ້ມຄອງ, ຕິດຕາມ ກວດກາ ແລະ ຊຸກຍູ້ການນໍາໃຊ້ແຫຼ່ງທຶນໃຫ້ມີປະສິດທິຜົນ;

4. ພິຈາລະນາໂຈະການເບີກຖອນ ຫຼື ການນໍາໃຊ້ແຫຼ່ງທຶນ ຂອງທະນາຄານທຸລະກິດ ທີ່ປະຕິບັດບໍ່ສອດຄ່ອງກັບນະໂຍບາຍ ແລະ ດໍາເນີນການແກ້ໄຂຮ່ວມກັບ ພາກສ່ວນກ່ຽວຂ້ອງ;

5. ສະຫຼຸບ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ລາຍງານໃຫ້ຄະນະຊີ້ນໍາລວມ ຊາບ ເປັນປົກກະຕິຕາມຂໍ້ຕົກລົງສະບັບນີ້;

6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກໍານົດໃນຂໍ້ຕົກລົງແຕ່ງຕັ້ງ ແລະ ຕາມການຊີ້ນໍາຂອງຄະນະຊີ້ນໍາລວມ.

## ໝວດທີ 4

## ການຄຸ້ມຄອງ, ການຕິດຕາມກວດກາ ແລະ ລາຍງານ

**ມາດຕາ 19 ການຄຸ້ມຄອງ**

ຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍສູ່ທ້ອງຖິ່ນ ເປັນຜູ້ຮັບຜິດຊອບຄຸ້ມຄອງແຫຼ່ງທຶນ ທີ່ປ່ອຍໃຫ້ທະນາຄານທຸລະກິດ ດ້ວຍການອະນຸມັດແຫຼ່ງທຶນ, ການຕິດຕາມກວດກາ ແລະ ຊຸກຍູ້ການນໍາໃຊ້ແຫຼ່ງທຶນໃຫ້ຖືກເປົ້າໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ຢູ່ທ້ອງຖິ່ນໃຫ້ມີປະສິດທິຜົນ.

**ມາດຕາ 20 ການຕິດຕາມກວດກາ**

ກົມບໍລິການທະນາຄານ ແລະ ສາຂາ ທະນາຄານແຫ່ງ ສປປ ລາວ ປະຈໍາພາກ ເປັນເຈົ້າການໃນການຕິດຕາມ-ກວດກາການປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໂດຍສົມທົບທະນາຄານທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ຕາມຂອບເຂດທີ່ຕົນຮັບຜິດຊອບ ເພື່ອຮັບປະກັນການນໍາໃຊ້ແຫຼ່ງທຶນໃຫ້ສອດຄ່ອງກັບເປົ້າໝາຍ.

**ມາດຕາ 21 ການສະຫຼຸບ ແລະ ລາຍງານ**

ທະນາຄານທຸລະກິດຕ້ອງລາຍງານການຈັດຕັ້ງປະຕິບັດ ເປັນປະຈໍາທຸກເດືອນຕາມຕົວຊີ້ວັດໃຫ້ຄະນະຮັບຜິດຊອບຈັດຕັ້ງປະຕິບັດ ເພື່ອສະຫຼຸບ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຂອງທະນາຄານທຸລະກິດ.

ຄະນະຮັບຜິດຊອບຊີ້ນໍາລວມຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ລາຍງານຜົນການຈັດຕັ້ງປະຕິບັດນະໂຍບາຍ ໃຫ້ແກ່ ລັດຖະບານ ທຸກໄຕມາດ ຢ່າງເປັນປົກກະຕິ.

**ມາດຕາ 22 ການໂຈະຊົ່ວຄາວ ແລະ ຍົກເລີກນະໂຍບາຍ**

ຄະນະຮັບຜິດຊອບຊີ້ນໍາລວມການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ສະເໜີຕໍ່ລັດຖະບານ ພິຈາລະນາໂຈະຊົ່ວຄາວ ຫຼື ຍົກເລີກ ການເບີກຖອນນໍາໃຊ້ທຶນ ກ່ອນສິ້ນສຸດໄລຍະເວລາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ໃນກໍລະນີ ນະໂຍບາຍດັ່ງກ່າວ ຖືກປະເມີນວ່າບໍ່ໄດ້ຮັບຜົນດີເທົ່າທີ່ຄວນ ຫຼື ຕາມຄວາມເໝາະສົມໃນແຕ່ລະ ໄລຍະຂອງເສດຖະກິດ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ຂໍ້ຫ້າມສໍາລັບທະນາຄານທຸລະກິດ**

ຫ້າມທະນາຄານທຸລະກິດ ມີພຶດຕິກໍາ ດັ່ງນີ້:

1. ສະເໜີຂໍແຫຼ່ງທຶນຈາກ ທະນາຄານແຫ່ງ ສປປ ລາວ ໂດຍສະໜອງຂໍ້ມູນທີ່ບໍ່ສອດຄ່ອງກັບ ຄວາມເປັນຈິງ;

2. ສະເໜີເປົ້າໝາຍຫົວໜ່ວຍທຸລະກິດ ຂໍກູ້ຢືມທີ່ມີເງື່ອນໄຂບໍ່ສອດຄ່ອງຕາມຂໍ້ຕົກລົງສະບັບນີ້;

3. ປ່ອຍກູ້ໃຫ້ຫົວໜ່ວຍທຸລະກິດ ເພື່ອຈຸດປະສົງປັບປຸງໂຄງສ້າງເງິນກູ້ ແລະ ຖືກຈັດຊັ້ນເປັນໜີ້ ບໍ່ເກີດດອກອອກຜົນ;

4. ລາຍງານຂໍ້ມູນທີ່ບໍ່ສອດຄ່ອງກັບຄວາມເປັນຈິງກ່ຽວກັບການນໍາໃຊ້ແຫຼ່ງທຶນຂອງຫົວໜ່ວຍ ທຸລະກິດ;

5. ມີພຶດຕິກໍາອື່ນໆຕາມການກໍານົດຂອງ ທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ.

**ມາດຕາ 24 ຂໍ້ຫ້າມສໍາລັບຫົວໜ່ວຍທຸລະກິດ**

ຫ້າມຫົວໜ່ວຍທຸລະກິດ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ເງິນກູ້ບໍ່ສອດຄ່ອງກັບເປົ້າໝາຍສັນຍາເງິນກູ້ ຫຼື ເປົ້າໝາຍທີ່ກໍານົດໃນຂໍ້ຕົກລົງສະບັບນີ້;

2. ລະເມີດການປະຕິບັດສິດ ແລະ ພັນທະຂອງຕົນຕາມສັນຍາເງິນກູ້ກັບທະນາຄານທຸລະກິດ;

3. ລາຍງານຂໍ້ມູນທີ່ບໍ່ສອດຄ່ອງກັບຄວາມເປັນຈິງກ່ຽວກັບການນໍາໃຊ້ແຫຼ່ງທຶນຂອງຕົນໃຫ້ແກ່ ທະນາຄານທຸລະກິດ.

**ມາດຕາ 25 ມາດຕະການຕໍ່ຜູ້ລະເມີດ**

ທະນາຄານທຸລະກິດ ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກໍານົດໄວ້ໃນມາດຕາ 23 ແລະ ບໍ່ປະຕິບັດພັນທະ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ຖືກຍົກເລີກການຮັບນະໂຍບາຍສິນເຊື່ອເພື່ອກະຈາຍ

ແຫຼ່ງທຶນສູ່ທ້ອງຖິ່ນ ແລະ ຮຽກເກັບຕົ້ນທຶນ ແລະ ດອກເບ້ຍ ຄ້າງຊໍາລະບ້ອງດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປ ລາວ ກ່ອນກໍານົດສັນຍາ ພາຍໃນເວລາ ສິບຫ້າວັນລັດຖະການ ນັບຈາກວັນທີ່ຖືກຮຽກເກັບ.

ຫົວໜ່ວຍທຸລະກິດ ລະເມີດຂໍ້ຫ້າມຕາມທີ່ກໍານົດໄວ້ໃນມາດຕາ 24 ແລະ ບໍ່ປະຕິບັດພັນທະ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ຈະຖືກຮຽກເກັບຄືນຕົ້ນທຶນກ່ອນກໍານົດສັນຍາ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ທະນາຄານແຫ່ງ ສປປ ລາວ, ຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ, ທະນາຄານທຸລະກິດ ແລະ ຫົວໜ່ວຍທຸລະກິດ ທີ່ເຂົ້າຮ່ວມການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ບຸນເຫຼືອ ສິນໄຊວໍຣະວົງ